# ເກີດມາໂດຍບັງເອີນຫລືມີຜູ້ສ້າງມາ

**ຄົ້ນພົບຄວາມເລິກລັບຂອງຊີວິດ**

ສົມມຸດວ່າພີ່ນ້ອງອອກໄປທ່ຽວພັກຜ່ອນຄາຍອາລົມຕາມຊາຍຫາດ ແລະກໍມີເວລາຫວ່າງອອກໄປຍ່າງຊົມຮ້ານກິບຊອບ ຫລືຮ້ານຂາຍຂອງປະດັບ ທີ່ຢູ່ໃກ້ໆຊາຍຫາດນັ້ນ ພີ່ນ້ອງກໍຈະເຫັນວ່າຮ້ານກິບຊອບຕ່າງໆລ້ວນເຕັມໄປດ້ວຍເຄື່ອງປະດັບທີ່ເຮັດມາຈາກຂອງທະເລ, ໄມ້, ແລະວັດຖຸຕ່າງໆ ຂອງປະດັບເຫລົ່ານີ້ ນັກແກະສະຫລັກ ນັກແຕ້ມ ນັກສິນລະປະ ຫລື ນັກຈິດຕະກອນ ແລະຊ່າງຝີມືຕ່າງໆໄດ້ເຮັດມັນຂຶ້ນມາ ແລະກໍເປັນຜົນງານທີ່ມີຄວາມປະນີດປະນອມ ມີຄວາມຄິດສ້າງສັນຫລາຍ ແມ້ແຕ່ປ້າຍລາຄາກໍຍັງສ້າງສັນ!

ແລະພີ່ນ້ອງອາດຈະຕິດຕາຕ້ອງໃຈອັນໃດອັນໜຶ່ງ ແລະກໍຍ່າງເຂົ້າໄປຖາມເຈົ້າຂອງຮ້ານວ່າ "ອັນນີ້ໜີ້ ຊ່າງໃດນໍ້ເຮັດຂຶ້ນມາ" ແລະຖ້າເຈົ້າຂອງຮ້ານຕອບວ່າ "ອັນນີ້ໜີ້..ລວມທັງຂອງທຸກສິ່ງໃນຮ້ານບໍ່ມີໃຜເຮັດຂຶ້ນມາ

ເມື່ອຄືນມານີ້ ໄດ້ເກີດມີເຫດລະເບີດໃນອາຄານນີ້ ແລະເມື່ອພວກເຮົາຍ່າງເຂົ້າມາພວກເຮົາກໍເຫັນທຸກສິ່ງທຸກຢ່າງທີ່ເຈົ້າກໍາລັງເຫັນຢູ່ໃນຫ້ອງນີ້" ເມື່ອໄດ້ຍິນດັ່ງນີ້ພີ່ນ້ອງກໍຄົງຮູ້ເລີຍວ່າ ເຈົ້າຂອງຮ້ານຄົນນີ້ບໍ່ເຕັມກໍເສຍເສັ້ນ. ເພາະວ່າພີ່ນ້ອງຮູ້ໄດ້ເລີຍວ່າ ສິ່ງສວຍງາມໃດໜຶ່ງບໍ່ສາມາດເກີດຂຶ້ນມາເອງ ຈະຕ້ອງມີຄົນສ້າງມັນຂຶ້ນມາ

ໃນຊ່ວງເວລາທ້າຍຂອງສັດຕະວັດທີ 18, ເປັນຊ່ວງເວລາທີ່ນະໂປລຽນ (Napoleon) ແລະກອງທັບຂອງລາວກໍາລັງຂ້າມທະເລເມດີເຕຣານຽນເພື່ອໄປບຸກເອຢິບນັ້ນ ຄືນໜຶ່ງເຊິ່ງເປັນຄືນທີ່ມີດາວເຕັມທ້ອງຟ້າ ນາຍທະຫານຫລາຍຄົນຂອງນະໂປລຽນເຊິ່ງເປັນຄົນທີ່ບໍ່ເຊື່ອໃນພະເຈົ້າໄດ້ພະຍາຍາມຖົກຖຽງກັນ ຫາເຫດຫາຜົນມາອ້າງວ່າໂລກນີ້ບໍ່ມີພະເຈົ້າ.

ນະໂປລຽນກໍຍ່າງໄປຍ່າງມາຟັງນາຍທະຫານພວກນັ້ນຖຽງກັນ ແລະກໍມີນາຍທະຫານຜູ້ໜຶ່ງຫັນມາຖາມນະໂປລຽນກ່ຽວກັບສິ່ງທີ່ພວກເຂົາຖົກຖຽງກັນວ່າລາວຈະມີຄວາມຄິດຄວາມເຫັນແນວໃດ ລາວກໍຄິດແລະກໍເວົ້າອອກມາວ່າ "ດີ ດີ, ຖ້າບໍ່ມີພະເຈົ້າ ແລ້ວແມ່ນໃຜລ່ະສ້າງໂລກມາ ແມ່ນໃຜລ່ະເຮັດໃຫ້ໂລກໝູນ ແລະເຮັດໃຫ້ທຸກສິ່ງຢ່າງຢູ່ໃນທີ່ມັນຢູ່ແລະເປັນໃນສິ່ງທີ່ມັນເປັນ?"
ລາວທັງເວົ້າທັງຊີ້ໄປທີ່ດາວເທິງຟ້າແລະທັງເບິ່ງໄປທີ່ພວກທະຫານເຫລົ່ານັ້ນ

ນະໂປລຽນຖາມຄຳຖາມໄດ້ດີຫລາຍ
ແມ່ນໃຜສ້າງໂລກນີ້ມາ ແມ່ນໃຜສ້າງດວງດາວເປັນລ້ານໆດວງເທິງທ້ອງຟ້າ? ໃຜເປັນຜູ້ກຳນົດໃຫ້ສິ່ງຕ່າງໆຢູ່ໃນທີ່ທີ່ມັນຢູ່?

ຄົນເຮົາໃນໂລກນີ້ມີພະເຈົ້າແລະນະມັດສະການບູຊາພະເຈົ້າຫລາຍອົງເຫລືອເກີນ; ບາງຄົນກໍນະ-ມັດສະການພະພຸດທະເຈົ້າ ບາງຄົນກໍນະມັດສະການພະຊິນໂຕ ບາງຄົນນະມັດສະການຜີ ແລະອີກຫລາຍໆພະ. ຄົນເຫລົ່າຕ່າງກໍເວົ້າວ່າພະເຈົ້າຂອງເຂົາແມ່ນພະເຈົ້າອົງແທ້ຈິງພຽງອົງດຽວ ແລະເປັນພະເຈົ້າອົງສູງສຸດໃນໂລກນີ້. ຫລາຍຄົນກໍເຊື່ອໃນທິດສະດີຂອງດາວິນ ພວກເຂົາເຊື່ອວ່າພະເຈົ້າບໍ່ໄດ້ສ້າງທຸກສິ່ງທຸກຢ່າງທີ່ເຮົາເຫັນທຸກມື້ນີ້

ຄູອາຈານໄດ້ສອນທິດສະດີວິວັດທະນາການໃຫ້ກັບນັກຮຽນວ່າ ໂລກແລະຈັກກະວານນີ້ເກີດມາຈາກການປ່ຽນແປງຂອງຫລາຍສິ່ງຫລາຍຢ່າງເຊິ່ງໃຊ້ເວລາຫລາຍລ້ານປີໃນການປ່ຽນແປງ. ທິດສະດີນີ້ສອນວ່າ ໃນຕອນທຳອິດໄດ້ເກີດມີເຊວ(ຈຸລັງ)ພຽງເຊວດຽວ ຜ່ານການປ່ຽນແປງຫລາຍຊີວະວິທະຍາແລະທໍລະວິທະຍາ ມັນກໍເລີຍເກີດມາເປັນຈັກກະວານນີ້. ໂອກາດລົມໆແລ້ງໆກັບການປ່ຽນແປງມະຫັດສະຈັນ ພາໃຫ້ເກີດມີຈັກກະວານອັນຊັບຊ້ອນຢ່າງທີ່ເຮົາເຫັນ! ຟັງແລ້ວເປັນໄປບໍ່ໄດ້

ເປັນໄປໄດ້ແທ້ບໍທີ່ຈັກກະວານອັນໃຫຍ່ເກີດຂຶ້ນມາຍ້ອນການປ່ຽນແປງ? ເປັນໄປໄດ້ແທ້ບໍທີ່ຈັກກະ-ວານນີ້ເກີດຂຶ້ນມາໂດຍເຫດບັງເອີນແລະບໍ່ມີຜູ້ໃດທີ່ມີສະຕິປັນຍາເຫລືອລົ້ນສ້າງມັນຂຶ້ນມາ?

ເມື່ອພວກເຮົາສຳຫລວດເບິ່ງທຸກສິ່ງທຸກຢ່າງໃນໂລກແລະໃນຈັກກະວານນີ້ ພວກເຮົາກໍຈະເຫັນພວກມັນມີຮູບຮ່າງແລະການປະກອບສ້າງທີ່ຫຍຸ້ງຍາກຊັບຊ້ອນເຫລືອເກີນ ແລະພວກເຮົາກໍສາ-ມາດສະຫລຸບໄດ້ວ່າຈະຕ້ອງມີຜູ້ສະຕິປັນຍາເຫລືອລົ້ນສ້າງແລະປະຄັບປະຄອງທຸກຊີວິດໃນໂລກນີ້.

ຄັ້ງໜຶ່ງຄົນທັງໂລກໄດ້ຕື່ນເຕັ້ນກັບການທີ່ຈະມີການປ່ອຍຍານອະວະກາດ ໂຄລົມເບຍ (Colombia) ເຊິ່ງເປັນຍານອະວະກາດລຳທຳອິດທີ່ຂຶ້ນສູ່ນອກໂລກ ພວກເຂົາຈັບຕາເບິ່ງຢ່າງໃກ້-ຊິດ. ພວກເຂົາເຫັນໄຟອອກມາຈາກບັ້ນທ້າຍຂອງຍານ ແລ້ວກໍຄ່ອຍໆທະຍານຂຶ້ນສູ່ຟ້າອາກາດ ຄົນທັງຫລາຍລໍຟັງລາຍງານຢ່າງໃຈຈົດໃຈຈໍ່ຈາກນັກບິນອະວະກາດໃນຂະນະທີ່ຍານກຳລັງຈະປ່ອຍໂຕອອກ ຈົນໄປເຖິງເວລາທີ່ຍານໄປຮອດອະວະກາດ. ຂໍ້ຄວາມຕ່າງໆທີ່ນັກບິນອະວະກາດລາຍງານແລະລາຍລະອຽດທຸກຢ່າງຂອງການແຜນການສົ່ງຍານອະວະກາດຂຶ້ນອອກສູ່ນອກໂລກ

ບອກໃຫ້ພວກເຮົາຮູ້ວ່ານັກວິທະຍາສາດແລະອີກຫລາຍໆຝ່າຍຕ້ອງໃຊ້ເວລາວາງແຜນແລະຕຽມ ການແກ່ອນທີ່ຈະສົ່ງຍານອາວະກາດອອກສູ່ນອກໂລກໄດ້.

ຖ້າມີຜູ້ໃດໜຶ່ງມາບອກຄົນທີ່ຈັບຕາເບິ່ງການອອກໂຕຂອງຍານໂຄລົມເບຍວ່າ ໂຄງການປ່ອຍຍານ ອະວະກາດນີ້ເກີດຂຶ້ນມາເອງບໍ່ມີໃຜວາງແຜນໃຫ້ມັນເກີດຂຶ້ນ ເຂົາກໍຄົງຈະກ່າວກັບຄົນຜູ້ທີ່ມາບອກ ນັ້ນວ່າ "ເຈົ້າບໍ່ບ້າກໍເສຍສະຕິ" ເມື່ອພວກເຮົາເບິ່ງໄປທີ່ທ້ອງຟ້າແລະເຫັນວ່າມີດວງດາວເປັນຈຳ-ນວນນັບບໍ່ຖ້ວນ ແລະຮູ້ວ່າດວງດາວເຫລົ່ານີ້ມີສິ່ງນຳທາງໃນການໝູນໂຄຈອນຢ່າງບໍ່ມີຄວາມຜິດ-ພາດຈົນນັກອະວະກາດສາມາດຄາດຄະເນໄດ້ວ່າອີກເທົ່ານັ້ນເທົ່ານີ້ປີດາວດວງນີ້ດາວເຄາະດວງນັ້ນ ຈະໝູນໂຄຈອນໄປຮອດບ່ອນນີ້ໄປຮອດບ່ອນນັ້ນ

ແລະພວກເຮົາກໍຄິດອອກໄດ້ວ່າຈະຕ້ອງມີຜູ້ມີສະຕິປັນຍາເລີດລ້ຳອອກແບບ,ສ້າງແລະຄວບຄຸມຈັກ-ກະວານອັນຊັບຊ້ອນທີ່ພວກເຮົາອາໃສຢູ່ນີ້.

ຜູ້ທີ່ມີສະຕິປັນຍາເລີດລ້ຳຜູ້ນັ້ນຄື ພະເຈົ້າ! ໃຫ້ເຮົາມາຊອກຮູ້ເພີ່ມເຕີມກ່ຽວກັບພະອົງ.
ແລະເຮົາຄວນຈະເລີ່ມຈາກຈຸດໃດໃນການຊອກຮູ້ງານສ້າງຂອງພະເຈົ້າ?

ໃຫ້ເຮົາມາເບິ່ງວ່າຜູ້ຂຽນພະທຳສັນລະເສີນໄດ້ກ່າວແນວໃດກ່ຽວກັບການຊົງສ້າງຂອງມະນຸດ:
(ເພງສັນລະເສີນ 139:14) "ຂ້າພຣະອົງຂໍສັຣເສີນພຣະອົງ ເພາະພຣະອົງຊົງເປັນທີ່ເຄົາຣົບຢຳ ເກງ ທຸກໆສິ່ງທີ່ພຣະອົງຊົງກະທຳນັ້ນກໍແປກປະຫລາດແລະອັດສະຈັນໃຈ ພຣະອົງຊົງເຂົ້າໃຈໃນ ຕົວຂ້າພຣະອົງດີ" ໃນພະຄຳພີພາສາອັງກິດເຂົາໄດ້ແປຕ່າງຈາກພາສາລາວເຮົາໜ້ອຍໜຶ່ງ ພະຄຳ ພີຂໍ້ນີ້ເຂົາແປອອກມາວ່າ "ຂ້າຈະສັນລະເສີນພະອົງ, ເພາະວ່າຂ້າພະອົງຖືກສ້າງມາຢ່າງໜ້າເກງ ກົວແລະຢ່າງໜ້າປະຫລາດໃຈ ທຸກສິ່ງທີ່ພະອົງສ້າງມາແສນວິເສດເຫລືອຫລາຍ"

ຮ່າງກາຍໃດໜຶ່ງທີ່ເກີດມາບົ່ງບອກເຖິງວ່າມີຜູ້ອອກແບບຮ່າງກາຍນັ້ນມາ
ພີ່ນ້ອງເຄີຍຄິດເຖິງຮູບຮ່າງການປະກອບສ້າງຂອງຕາຫລືບໍ່?

ນັກວິທະຍາສາດໄດ້ກ່າວ ຖ້າທຽບກ້ອງຖ່າຍຮູບທີ່ທັນສະໄໝທີ່ສຸດກັບກະຈົກຕາແລະແກ້ວຕາຂອງ ຄົນເຮົາ ກ້ອງຖ່າຍຮູບທີ່ທັນສະໄໝນັ້ນປຽບເໝືອນກັບຂອງຫລິ້ນຂອງເດັກນ້ອຍ

ຈໍປະສາດຮັບແສງໃນຕາຂອງເຮົາມີຈຸດຮັບແສງ (rods and cones) ເປັນຫລາຍລ້ານຈຸດ ຈຸດຮັບແສງເຫລົ່ານີ້ປ່ຽນແສງທີ່ເຂົ້າໄປໃນຕາໃຫ້ເປັນກະແສປະສາດ ຂະບວນການປ່ຽນແປງນີ້ສັບສົນຫລາຍ ແມ້ແຕ່ຫ້ອງທົດລອງທີ່ທັນສະໄໝກໍຍັງບໍ່ສາມາດຈໍາລອງຂະບວນການນີ້ໄດ້.

ແລ້ວເຊວສະໝອງຈະປ່ຽນກະແສປະສາດນີ້ໃຫ້ເປັນຮູບພາບ. ຄອມພິວເຕີທີ່ທັນສະໄໝທີ່ສຸດກໍຍັງບໍ່ສາມາດເຮັດໄດ້ສ່ວນໜຶ່ງຂອງຂະບວນການນີ້.

ຄັ້ງໜຶ່ງດາວິນໄດ້ເວົ້າອອກມາວ່າເມື່ອລາວຄິດກ່ຽວກັບຕາແລະວິທີຕ່າງໆທີ່ຕາທີ່ບົ່ງບອກວ່າຕາອາດສາມາດເກີດມາຈາກທໍາມະຊາດ ລາວຄິດກ່ຽວກັບສິ່ງນີ້ຫລາຍມັນເລີຍເຮັດໃຫ້ລາວບໍ່ສະບາຍ.
ເຫດຜົນກໍຄືວ່າ:ຕາບໍ່ສາມາດເກີດມາຈາກຂະບວນວິວັດທະນາການເຊິ່ງໃຊ້ເວລາຫລາຍລ້ານປີ ຕາຈະເບິ່ງບໍ່ເຫັນຖ້າຫາກວ່າມັນບໍ່ຖືກສ້າງເສັດສົມບູນບາດດຽວ ເລັນເຊິ່ງເປັນຕົວຄວບຄຸມຈຸດສຸມແສງຈະໃຊ້ການຫຍັງບໍ່ໄດ້ຖ້າບໍ່ມີຈຸດຮັບແສງ (retina). ກ່ອນຄົນໃດຄົນໜຶ່ງຈະເບິ່ງເຫັນ ອະໄວຍາວະຕ່າງໆທີ່ກ່ຽວຂ້ອງຕ້ອງມີການປະສານງານກັນຢ່າງກົມກືນ ຂາດອະໄວຍາວະອັນໃດອັນໜຶ່ງໄປກໍບໍ່ໄດ້ ແລະອະໄວຍາຕ່າງໆເຫລົ່ານີ້ກໍໄດ້ອອກແບບມາຢ່າງລະອຽດຮອບຄອບ.

ຮ່າງກາຍຂອງຄົນເຮົາກໍຖືກສ້າງມາໃນທໍານອງນີ້ຄືກັນ. ທຸກອະໄວຍາວະຂອງຮ່າງກາຍເຮັດໜ້າທີ່ອັນສັບຊ້ອນຂອງໃຜມັນຢ່າງມະຫັດສະຈັນ.

(ເພງສັນລະເສີນ 139:14) ຖືກຕ້ອງທີ່ຜູ້ຂຽນເພງສັນລະເສີນກ່າວວ່າ ພວກເຮົາຖືກສ້າງມາຢ່າງໜ້າເກງກົວແລະຢ່າງໜ້າປະຫລາດໃຈ!

(ປະຖົມມະການ 1 :26) ພະຄໍາພີໄດ້ກ່າວໃນພະທໍາປະຖົມມະການ 1 :26 ວ່າ “ບັດນີ້ເຮົາຈະສ້າງມະນຸດໃຫ້ມີຮູບຮ່າງຄ້າຍຄືເຮົາເອງ...”
ພະເຈົ້າຊົງມີພະສະຕິປັນຍາເຫລືອລົ້ນເຫລືອເກີນແລະເຕັມໄປດ້ວຍຄວາມເປັນຫ່ວງເປັນໄຍທີ່ພະອົງໄດ້ສ້າງໃຫ້ມະນຸດມີຕາສອງຂ້າງເພື່ອເຂົາຈະໄດ້ເຫັນສິ່ງມະຫັດສະຈັນທີ່ພະອົງສ້າງ.

ອາດາມແລະເອວາບໍ່ແມ່ນຢູ່ຊື່ໆກໍເກີດຂຶ້ນມາ ພະຄໍາພີໄດ້ກ່າວວ່າພະເຈົ້າພະເຈົ້າໄດ້ສ້າງເຮົາທຸກຄົນມາໃນພະສາຍາ (ຕາມຮູບຮ່າງ) ຂອງພະອົງ ພະອົງເປັນນັກວິສະວະກອນທີ່ຊົງພະສະຕິປັນຍາທີ່ສ້າງພວກເຮົາໃຫ້ມີຊີວິດ.

ໂຄງປະກອບສ້າງຂອງມະນຸດແມ່ນສະຫລັບຊັບຊ້ອນຫລາຍ ແລະມີພຽງແຕ່ນັກອອກແບບທີ່ສະ-ຫລາດທີ່ສຸດເທົ່ານັ້ນທີ່ສາມາດອອກແບບແລະສ້າງມະນຸດໄດ້

ແລ້ວຈັກກະວານເດ໋? ມີຫລັກຖານອັນໃດແດ່ທີ່ບອກວ່າພະເຈົ້າແຫ່ງນັກອອກແບບໄດ້ສ້າງຈັກກະ-ວານອັນກວ້າງໃຫຍ່ນີ້ມາ?

ດຣ. ຟິວລິບ ຈອນສັນ ສາດສະດາຈານທີ່ມະຫາວິທະຍາໄລ ເບີກລີ ໄດ້ເວົ້າກ່ຽວກັບດາວິນແລະວິວັດທະນາການວ່າ ເປັນເວລາ 140 ກວ່າປີແລ້ວທີ່ດາວິນໄດ້ແຕ່ງທິດສະດີນີ້. ແລ້ວມີຫຍັງຫລືຫລັກຖານອັນໃດແດ່ທີ່ບົ່ງບອກວ່າທິດສະດີລາວຖືກຕ້ອງ? ເບິ່ງແລ້ວທິດສະດີວິວັດທະນາການຂອງດາວິນມີຄວາມຂັດແຍ່ງໃນໂຕມັນເອງ. ຕົວຢ່າງ ຮ່ອງຮອຍຂອງສິ່ງມີຊີວິດທີ່ເຫັນຢູ່ຕາມແຜ່ນຫີນ (fossil) ບໍ່ໄດ້ສະແດງໃຫ້ເຫັນເລີຍວ່າສິ່ງມີຊີວິດເຫລົ່ານີ້ມີການປ່ຽນແປງ ພວກມັນຍັງຄົງຮູບຮ່າງເດີມຕະຫລອດ

ຜູ້ທີ່ເຊື່ອທິດສະດີຂອງດາວິນກໍບອກວ່າທິດສະດີດາວິນຖືກຕ້ອງໆ ແຕ່ວ່າຫລັກຖານທີ່ພົບຊ້ຳພັດເວົ້າອີກແບບໜຶ່ງ ມີຕອນໃດແດ່ແລະຢູ່ບ່ອນໃດແດ່ທີ່ຄົນທັງຫລາຍທີ່ເຊື່ອທິດສະດີຂອງດາວິນສາ-ມາດຫາຫລັກຖານມາຢືນຢັນວ່າສັດຈາກສາຍພັນໜຶ່ງໄດ້ປ່ຽນແປງໄປເປັນສັດອີກສາຍພັນໜຶ່ງ ເຊິ່ງສອງສາຍພັນນີ້ມີຄວາມແຕກຕ່າງກັນຢ່າງຂາດຂັ້ນ? ມີຫລັກຖານອັນໃດແນ່ບໍ່ ມາອ້າງອີງວ່າສິ່ງທີ່ເຂົາບອກວ່າເກີດຂຶ້ນນັ້ນເກີດຂຶ້ນແທ້? ຈອນສັນ ຖາມ (ແປມາຈາກວາລະສານ ສະບັບວັນທີ 8 ເດືອນ 12 ປີ 1997, ໜ້າ 20)

ຜູ້ພະຍາກອນເອຊາຢາເຊີນຊວນໃຫ້ເຮົາທຸກຄົນຢ່າໄປສົນໃຈກັບສິ່ງເລັກນ້ອຍໃນຈັກກະວານແຕ່ປ່ຽນມາສົນໃຈກັບສິ່ງທີ່ພະເຈົ້າໄດ້ກັບທຳໃນທ້ອງຟ້າ.

(ອາຊາຢາ 40:26) “ຈົ່ງແຫງນຫນ້າຂຶ້ນເບິ່ງຟ້າດູ ຜູ້ໃດສ້າງດາວທັງຫລາຍທີ່ທ່ານເຫັນນີ້ ພຣະອົງຜູ້ຊົງນຳມັນອອກມາເຫມືອນຂະບວນກອງທັບ ຊົງຮູ້ຈັກວ່າມັນມີຫລາຍປານໃດ ແລະຊົງຕັ້ງຊື່ໃຫ້ມັນທຸກໆດວງ ດ້ວຍຣິດທານຸພາບອັນຍິ່ງໃຫຍ່ຂອງພຣະອົງນັ້ນ ຈຶ່ງບໍ່ມີຈັກດວງສູນເສັຽໄປ” ອາຊາຢາ 40:26

ກ່ອນທີ່ມີການປະດິດກ້ອງໂທລະທັດ ມະນຸດໃຊ້ຕາເປົ່າໆເບິ່ງແລະນັບດາວ ເຂົາໄດ້ສະຫລຸບອອກມາວ່າ ມີດາວທັງໝົດ 5,110 ດາວ

ແຕ່ພະຄຳພີໄດ້ກ່າວວ່າ

(ເຢເຣມີຢາ 33:22) "ບໍຣິວານຂອງຟ້າສວັນຈະນັບບໍ່ໄດ້..." ເຢເຣມີຢາ 33:22

ຖ້າພີ່ນ້ອງມີເວລາຢາກໃຫ້ພີ່ນ້ອງສ່ອງກ້ອງໂທລະທັດໄປທີ່ທ້ອງຟ້າ ແລ້ວພີ່ນ້ອງຈະເຫັນວ່າ ຈຸດແສງນ້ອຍໆແວວວັບແວວວາວເທິງທ້ອງຟ້າ ນອກເໜືອຈາກດາວແລ້ວໃນແກແລກຊີທັງໝົດມີຕາເວັນທີ່ກຳລັງເຜົາໄໝ້ເປັນຈຳນວນຫລາຍລ້ານດວງແລະນັບບໍ່ໄດ້ ແລະຢູ່ອ້ອມໆຕາເວັນເຫລົ່ານີ້ ມີດາວເຄາະເປັນຈຳນວນມະຫາສານ ທີ່ກຳລັງໂຄຈອນໄປມາ. ຖ້າພີ່ນ້ອງສ່ອງໄປຍັງທາງຊ້າງເຜືອກ ພີ່ນ້ອງກໍຈະປາຍຂອງແກແລກຊີຂອງເຮົາເຊິ່ງມີຮູບຮ່າງຄ້າງຄືຈານຈອງຖ້ວຍທີ່ພີ່ນ້ອຍໃສ່ລາບໃສ່ແກງກິນທຸກມື້

ນັກດາລາສາດ ຟຣິທສ໌ ຄອນ ໄດ້ກ່າວວ່າ "ບ້ານຂອງເຮົາໃນຈັກກະວານນີ້ປຽບຄືດັ່ງວົງກົມກົ້ນຫອຍ ມີດາວອ້ອມຮອບຫລາຍກວ່າ 200,000 ລ້ານດວງ ດວງດາວເຫລົ່ານີ້ປຽບເໝືອນບັ້ງກະໂພກໄຟທີ່ໝູນໃນອາກາດ" (ແປມາຈາກ Wonder Worlds ບົດທີ 20)

ທຸກໆ 24 ຊົ່ວໂມງ ແກແລກຊີຂອງເຮົາເດີນທາງຜ່ານອາວະກາດໄດ້ 1.5 ລ້ານ (ລ້ານຫ້າແສນ) ໄມ (2,400,000 ກິໂລແມັດ) ດ້ວຍຄວາມໄວ 66,000 ໄມຕໍ່ຊົ່ວໂມງ(105,600 ກິໂລແມັດຕໍ່ຊົ່ວໂມງ). ຟັງແລ້ວກໍບໍ່ໜ້າເຊື່ອ

ຖ້າໃຊ້ກ້ອງໂທລະທັດທີ່ທັນສະໄໝສ່ອງຈາກພະເຂົາພາໂລມາສ່ອງເບິ່ງກຸ່ມດາວໃຫຍ່ໆ ເຮົາຈະເຫັນວ່າເມື່ອສ່ອງເລິກໆເຂົ້າໄປໃນກຸ່ມດາວໃຫຍ່ໆນີ້ ສິ່ງທີ່ເຮົາເຫັນແມ່ນແກແລກຊີອື່ນອີກເປັນຫລາຍລ້ານແກແລກຊີ (ແປມາຈາກ ວາລະສານ National Geographic ສະບັບ ເດືອນ 5 ປີ 1974 ໜ້າ 592)

ສິ່ງທີ່ກ້ອງໂທລະທັດ ຮັບໂບ (ເປັນຄືດັ່ງຫ້ອງສັງເກດການທີ່ຢູ່ເທິງອາວະກາດ) ໄດ້ຄົ້ນພົບໄດ້ເຮັດຂໍ້ມູນທາງວິທະຍາສາດທີ່ກ່າວມາຂ້າງເທິງນີ້ລ້າສະໄໝ! ແລະກໍຍັງກຳຈັດຂໍ້ສົງໄສຫລືສັນນິຖານຕ່າງໆຂອງນັກວິທະຍາສາດທີ່ເຂົາຕັ້ງຂຶ້ນມາສອງສາມປີທີ່ແລ້ວ. ຈາກກ້ອງນີ້ນັກວິທະຍາສາດໄດ້ຄົ້ນພົບແສງທີ່ເລີ່ມເດີນທາງຜ່ານອາວະກາດເມື່ອ 38 ລ້ານປີແສງທີ່ຜ່ານມາ ເຊິ່ງພິສູດໃຫ້ເຫັນວ່າຂະໜາດເວລາຍັງບໍ່ມີຈຸດຈົບ ຈັກກະວານກໍບໍ່ມີຈຸດຈົບຄືກັນ! ຟັງແລ້ວກໍເຫລືອເຊື່ອແທ້ໆ

ພະເຈົ້າໄດ້ໃຫ້ຕົວຢ່າງປະກອບທີ່ຊ່ວຍໃຫ້ເຮົາເຂົ້າໃຈຫລາຍຂຶ້ນກ່ຽວກັບຄວາມຍິ່ງໃຫຍ່ຂອງທຸກສິ່ງທຸກຢ່າງ. ພະເຈົ້າໄດ້ພາອັບຣາຮາມອອກມາເບິ່ງທ້ອງແລະບອກໃຫ້ລາວນັບເບິ່ງດວງດາວ

(ປະຖົມມະການ 15:5) ພະເຈົ້າໄດ້ຕັດວ່າ "ຈົ່ງນັບດວງດາວທີ່ຢູ່ທ້ອງຟ້າທີ່ເຈົ້າເຫັນຢູ່ນັ້ນເບິ່ງດູນັບໄດ້ບໍ່ ເຈົ້າຈະມີເຊື້ອສາຍຫລາຍຄືກັນກັບດວງດາວເຫລົ່ານັ້ນ"

ໃນບໍ່ດົນມານີ້ ນັກດາລາສາດທ່ານໜຶ່ງໄດ້ເວົ້າວ່າ ຖ້າເຮົາມາດນັບຊາຍທຸກເມັດຕາມຫາດຊາຍທຸກບ່ອນທຸກທີ່ໃນໂລກ ຈຳນວນຂອງເມັດຊາຍກໍຈະມີພໍປານໆກັນກັບຈຳນວນດວງດາວໃນຟ້າອາກາດ. ເທື່ອໜ້າຖ້າພີ່ນ້ອງໄປຫາດຊາຍ ກໍໃຫ້ລອງເອົາຊາຍມາຈັກຄຸໜຶ່ງແລ້ວກໍນັບເບິ່ງວ່າໃນຄຸນັ້ນມີຊາຍຈັກເມັດ.

(ເພງສັນລະເສີນ 8:3,4) ບໍ່ຕ້ອງສົງໄສເລີຍທີ່ກະສັດດາວິດໄດ້ເວົ້າ "ເມື່ອຂ້າພຣະອົງຫລຽວເບິ່ງທ້ອງຟ້າທີ່ພຣະອົງຊົງສ້າງ ແລະຫລຽວເບິ່ງເດືອນດາວທີ່ພຣະອົງຕັ້ງໄວ້ ມະນຸດສຳຄັນຫຍັງພໍທີ່ພຣະອົງຈະຄິດເຖິງເຂົາ ແລະດູແລຮັກສາເຂົາ ເປັນການປະຫລາດໃຈແທ້"

ເຮົາເຄີຍຄິດບໍ່ວ່າ ໄດ້ມີພະເຈົ້າຜູ້ມີອຳນາດຄອບຄອງແລະດູແລຈັກກະວານອັນກວ້າງໃຫຍ່ນີ້ ແລະພະເຈົ້າອົງນີ້ກໍເປັນຫ່ວງເປັນໄຍມະນຸດແລະບັນຫາຕ່າງໆທີ່ເຂົາມີ?

(ມັດທາຍ 10:31) ພະເຍຊູໄດ້ຕັດວ່າແມ້ແຕ່ນົກກະຈອກໂຕໜຶ່ງຕົກລົງພື້ນດິນ ພະເຈົ້າກໍຍັງຮູ້ "ເຫດສັນນັ້ນຢ່າຊູ່ຢ້ານ ຝ່າຍພວກທ່ານກໍປະເສີດກວ່ານົກຈອກຫລາຍໂຕ" ມັດທາຍ 10:31 ແລະພະເຍຊູຍັງກ່າວເພື່ອເໜັ້ນຄວາມຮັກແລະຄວາມເປັນຫ່ວງເປັນໄຍຂອງພະເຈົ້າວ່າ

(ມັດທາຍ 10:30) "ເຖິງຜົມຂອງທ່ານກໍຊົງນັບໄວ້ແລ້ວຫມົດທຸກເສັ້ນ" ມັດທາຍ 10:30 ພະອົງຊ່າງເປັນພະເຈົ້າທີ່ແສນດີແທ້ໆ!

ພະເຈົ້າມີສິດອັນໃດຈິ່ງບອກໃຫ້ຄຣິດສຕຽນທຸກໆຄົນນະມັດສະການພະອົງພຽງອົງດຽວ? ພະເຈົ້າແຫ່ງພະຄຳພີແລະແຫ່ງຄຣິສຕຽນໄດ້ກ່າວວ່າພະອົງສົມຄວນໄດ້ຮັບການນະມັດສະການແລະການຖະຫວາຍໂຕຂອງເຮົາເພາະວ່າພະອົງເປັນພະເຈົ້າຜູ້ສ້າງ. ຖ້າພະອົງເປັນຄືພະອົງກ່າວແລະເປັນພະຜູ້ສ້າງ ພະອົງກໍສົມຄວນແລ້ວທີ່ຈະໄດ້ຮັບການນະມັດສະການຂອງເຮົາ.

ໂຢຮັນໄດ້ເຫັນນິດກ່ຽວກັບບັນລັງຟ້າສະຫວັນ

(ພະນິມິດ 4:10-11) ໃຫ້ເຮົາມາສັງເກດນຳກັນວ່າໂຢຮັນໄດ້ເຫັນຫຍັງໃນນິມິດ
"ເມື່ອນັ້ນບັນດາຜູ້ອາວຸໂສຊາວສີ່ທ່ານກໍຂາບລົງຖວາຍບັງຄົມພຣະອົງຜູ້ປະທັບເທິງຣາຊບັນລັງນັ້ນ ນະມັສການພຣະອົງ ຜູ້ຊົງພຣະຊົນຢູ່ຕລອດໄປເປັນນິດ ແລ້ວຖອດພວງມາລັຍອອກວາງລົງຕໍ່ຫນ້າຣາຊບັນລັງຮ້ອງວ່າ, 'ຂ້າແດ່ອົງພຣະຜູ້ເປັນເຈົ້າ ພຣະຜູ້ເປັນເຈົ້າຂອງຂ້າພຣະອົງທັງຫລາຍ ພຣະອົງຊົງສົມຄວນທີ່ຈະໄດ້ຮັບຄຳສັຣເສີນ ພຣະກຽດ ແລະຣິດເດດ ເພາະວ່າພຣະອົງໄດ້ຊົງສ້າງສັພສິ່ງທັງປວງ ແລະສັພສິ່ງທັງປວງນັ້ນກໍຊົງສ້າງຂຶ້ນແລ້ວ ແລະດຳຣົງຢູ່ຕາມຊອບພຣະທັຍພຣະອົງ'"

ຕໍ່ໜ້າພະພັກພະເຈົ້າ ຜູ້ອາວຸດໂສເຫລົ່ານີ້ໄດ້ສັນລະເສີນແລະນະມັດສະການພະອົງຜູ້ເປັນພະຜູ້ສ້າງ ນີ້ກໍເປັນເຫດຜົນດຽວກັນທີ່ພວກເຮົາທຸກຄົນຄວນນະມັດສະການພະເຈົ້າແຫ່ງຟ້າສະຫວັນ.

ພະອົງຄືຜູ້ທີ່ສ້າງໂລກນີ້ແລະເຮົາທຸກຄົນມາ. ແຕ່ວ່າບາງຄົນອາດຈະມີຄຳຖາມວ່າ "ມີຫຍັງບໍ່ທີ່ເປັນຫລັກຖານວ່າພະເຈົ້າຊົງເປັນພະຜູ້ສ້າງ?" ພະເຈົ້າໄດ້ບອກພວກເຮົາວ່າທຸກສິ່ງທຸກຢ່າງທີ່ເຮົາເຫັນບໍ່ວ່າຈະຢູ່ອ້ອມຂ້າງເຮົາຫລືຢູ່ບ່ອນໃດກໍແລ້ວແຕ່ ເປັນຫລັກຖານແຫ່ງການຊົງສ້າງຂອງພະອົງ.

(ໂຣມ 1:20) ".. ຄືຣິດທານຸພາບອັນຖາວອນແລະຄວາມເປັນພຣະຂອງພຣະອົງ ກໍໄດ້ປາກົດແຈ້ງໃນສັພສິ່ງທີ່ພຣະອົງໄດ້ຊົງສ້າງ"

ການຊົງສ້າງນັ້ນໄດ້ເປັນຫລັກຖານໃຫ້ເຮົາເຫັນວ່າພະເຈົ້າຊົງເປັນຜູ້ສ້າງທຸກຊັບພະສິ່ງ. ຖ້າຫາກວ່າໄປທຽວບ່ອນໃດບ່ອນໃດບ່ອນໜຶ່ງທີ່ເຮົາຄິດວ່າສະຖານທີ່ນັ້ນບໍ່ເຄີຍມີຄົນໄປເຫັນມາກ່ອນ ພໍເມື່ອເຮົາໄປຮອດແລ້ວເຮົາເຫັນຮອຍຕີນຄົນເຮົາກໍຈະຮູ້ເລີຍວ່າມີຄົນມາສະຖານທີ່ນັ້ນກ່ອນແລ້ວ ເຖິງແມ້ວ່າເຮົາບໍ່ເຄີຍເປັນຄົນນັ້ນກໍຕາມ. ຮອຍຕີນນັ້ນເປັນຫລັກຖານວ່າມີຄົນໄປບ່ອນນັ້ນມາກ່ອນແລ້ວ, ແລ້ວສິ່ງຕ່າງໆທີ່ເຮົາທຸກມື້ນີ້ເດ ບໍ່ໄດ້ບົ່ງບອກວ່າມີຜູ້ໃດສ້າງມາຫລື?

ບໍ່ແມ່ນມີແຕ່ພະບິດາເຈົ້າອົງດຽວເທົ່ານັ້ນທີ່ສ້າງໂລກແລະສັບພະສິ່ງຕ່າງໆ. ພະຄຳພີໄດ້ບອກໃຫ້ພວກເຮົາຮູ້ກ່ຽວກັບຜູ້ຮ່ວມສ້າງຂອງພະອົງ

(ໂຢຮັນ 1:1-3,14)"ເມື່ອຕົ້ນເດີມນັ້ນພຣະທັມຊົງເປັນຢູ່ແລ້ວ ພຣະທັມນັ້ນຊົງສະຖິດຢູ່ກັບພຣະເຈົ້າ ພຣະທັມນັ້ນແຫລະ, ຊົງເປັນພຣະເຈົ້າ ເມື່ອຕົ້ນເດີມນັ້ນພຣະທັມຊົງສະຖິດຢູ່ກັບພຣະເຈົ້າ ພຣະ

ເຈົ້າຊົງສ້າງສິ່ງທັງປວງຂຶ້ນມາໂດຍພຣະທັມ ໃນບັນດາສິ່ງທີ່ເປັນມານັ້ນ ບໍ່ມີຈັກສິ່ງທີ່ເປັນມາໂດຍນອກຈາກພຣະທັມ ພຣະທັມໄດ້ຊົງບັງເກີດເປັນມະນຸດ ແລະຊົງອາໄສຢູ່ຖ້າມກາງເຮົາທັງຫລາຍບໍຣິບູນດ້ວຍພຣະຄຸນແລະຄວາມຈິງ ເຮົາທັງຫລາຍໄດ້ເຫັນສະງ່າຣາສີຂອງພຣະອົງ ຄືສະງ່າຣາສີອັນສົມກັບພຣະບຸດອົງດຽວຂອງພຣະອົງ"

ພະເຍຊູໄດ້ຮ່ວມໃນການຊົງສ້າງທຸກສັບພະສິ່ງຂອງພະບິດາ
ພະທຳເອເຟໂຊ 3:9 ໄດ້ກ່າວວ່າ "ແລະເຮັດໃຫ້ຄົນທັງປວງເຫັນແຈ້ງໃນແຜນການແຫ່ງຂໍ້ລັບເລິກທີ່ຊົງອັດບັງໄວ້ກັບພຣະເຈົ້າຜູ້ຊົງນິຣະມິດສ້າງສັພສິ່ງທັງປວງ ຄືຊົງອັດບັງໄວ້ຕັ້ງແຕ່ແຮກສ້າງໂລກ"

ໃນສະບັບພາສາອັງກິດໄດ້ກ່າວແຕກຕ່າງຈາກພາສາລາວເຮົາໜ້ອຍໜຶ່ງ ໃນສະບັບພາສາວອັງກິດໄດ້ກ່າວວ່າ "...ແຫ່ງຂໍ້ເລິກລັບນັບຕັ້ງແຕ່ການນິລະມິດສ້າງໄດ້ຖືກອັດບັດໄວ້ກັບພະເຈົ້າຜູ້ຊົງສ້າງຊັບພະສິ່ງທັງປວງຜ່ານພະເຍຊູຄຣິດ."

ຂອງດີຂອງປະເສີດທຸກຢ່າງທີ່ມະນຸດເຄີຍມີຫລືຈະມີໃນອານາຄົດຂ້າງໜ້າແມ່ນມາຈາກພະເຈົ້າແລະພະເຍຊູ. ພະເຈົ້າບໍ່ພຽງແຕ່ສ້າງມະນຸດໃນພະສາຍຍາຂອງພະອົງແລະມອບຈັກກະວານອັນສວຍງາມໃຫ້ເປັນບ່ອຍອາໄສຂອງເຂົາເທົ່ານັ້ນ ພະເຈົ້າຍັງເປັນຫ່ວງເປັນໄຍກັບທຸກຄວາມຕ້ອງການຂອງມະນຸດ

(ເພງສັນລະເສີນ 145:15,16) "ທຸກໆສິ່ງທີ່ມີຊີວິດກໍມີຄວາມຫວັງຢ່າງລົ້ນເຫລືອຢູ່ໃນພຣະອົງແລະພຣະອົງຊົງປະທານອາຫານໃຫ້ຕາມທີ່ເຂົາຕ້ອງການ ພຣະອົງຊົງປະທານໃຫ້ເຂົາຢ່າງພຽງພໍແລະຊົງໃຫ້ເຂົາເພິ່ງພໍໃຈໃນຄວາມປະສົງທຸກຢ່າງ"

ໃຫ້ເຮົາມາສັງເກດສອງສາມສິ່ງທີ່ສະແດງໃຫ້ເຖິງຄວາມເປັນຫ່ວງເປັນໄຍທີ່ພະເຈົ້າມີຕໍ່ທຸກສັບພະສິ່ງທີ່ພະອົງສ້າງ. ໃຫ້ຄິດເບິ່ງນ້ຳທີ່ເຮົາດື່ມ. ນ້ຳນີ້ມີອາຍຸຫລາຍກວ່າປີຣະມິດ ຫລືພູເຂົາສູງຕ່າງໆ. ນ້ຳອາດຈະເປື້ອນແລະສົກກະປົກໄປດ້ວຍສານເຄມີແລະຂອງເສຍຕ່າງໆ ແຕ່ວ່າເມື່ອນ້ຳເປັນອາຍປິວຂຶ້ນໄປໃນຊັ້ນບັດຍາດກາດ ນ້ຳນັ້ນໄດ້ກາຍເປັນນ້ຳສະອາດ ແລ້ວກໍເປັນຝົນ ເປັນນ້ຳໝອກເປັນສະໂນຕົກລົງມາໃຫ້ເຮົາໄດ້ຊົມໃຊ້ ອັນນີ້ຊ່າງເປັນລະບົບໝູນວຽນນ້ຳທີ່ວິເສດແທ້ທີ່ພະເຈົ້າໄດ້ອອກແບບມາ! ເທິງທ້ອງຟ້າພະເຈົ້າກໍໄດ້ສ້າງໃຫ້ມີດວງຕາເວັນ! ຖ້າຫາກວ່າຕາເວັນນີ້ໃຫຍ່ຫລືຫຍັບເຂົ້າມາໃກ້ໂລກອີກໜ້ອຍໜຶ່ງ ມະຫາສະໝຸດຕ່າງໆກໍຄົງກາຍເປັນນ້ຳຟົດເດືອດໄປໝົດແລ້ວ

ຖ້າຫາກວ່າຕາເວັນນ້ອຍຫລືຫຍັງໄປໄກໂລກອີກໜ້ອຍໜຶ່ງ ຊັ້ນບັນຍາກາດໂລກກໍຄົງຊັ້ນນ້ຳແຂງໄປໝົດແລ້ວ ຖ້າວ່າຕາເວັນຕະຫຍັບເຂົ້າມາໃກ້ຫລືຫຍັບໄກອອກໄປ ຜົນທີ່ຕາມມາກໍຄື ບໍ່ມີຊີວິດໃດຫລົງເຫລືອໃນໂລກ ພະເຈົ້າບໍ່ພຽງແຕ່ສ້າງທຸກສັບພະສິ່ງມາເທົ່າ ແຕ່ວ່າພະອົງຍັງປົກປ້ອງດູແລທຸກສັບພະສິ່ງດ້ວຍ!

(ໂຢບ 12:10) ອາກາດທີ່ເຮົາຫາຍໃຈເຂົ້າໄປແມ່ນເປັນຂອງປະທານຈາກພະເຈົ້າ: ພະຄຳພີໄດ້ກ່າວວ່າ " ຊີວິດຂອງສິ່ງທີ່ມີຊີວິດທຸກຢ່າງຢູ່ໃນພຣະຫັດຂອງພຣະອົງ (ລວມ)ທັງລົມຫາຍໃຈຂອງມະນຸດທັງປວງ)"

ພະເຈົ້າໄດ້ສ້າງຈັກກະວານນີ້ມາ, ແລະພະອົງຮູ້ດີເຖິງສູດການປະກອບສ້າງຂອງອາກາດທີ່ເຮົາແລະທຸກສິ່ງມີຊີວິດຫາຍໃຈເຂົ້າໄປ

ພະອົງຊົງຮູ້ດີວ່າໃນຊັ້ນບັນຍາກາດຈະໃຫ້ສ່ວນປະສົມຂອງໄນໂຕຣເຈນ, ອອກຊີເຈນ, ອາຣ໌ກອນແລະຄາບອກໄດອອກໄຊເທົ່າໃດ. ອາກາດແລະຊັ້ນບັນຍາກາດເກີດຂຶ້ນມາເອງບໍ່ໄດ້! ພະເຈົ້າບໍ່ໄດ້ສ້າງໂລກອັນສວຍງາມແລະຈັກກະວານທີ່ຍິ່ງໃຫຍ່ນີ້ມາໂດຍໄຮ້ຄ່າ ແຕ່ພະອົງສ້າງໂລກແລະຈັກ-ກະວານນີ້ແມ່ນເພື່ອມະນຸດຜູ້ທີ່ເຫັນຄຸນຄ່າຄວາມສວຍງາມຂອງໂລກ ແລະມີຄວາມສຸກທີ່ໄດ້ອາໄສຢູ່ໃນໂລກ

(ເອຊາຢາ 45:18) "ພຣະຜູ້ເປັນເຈົ້າຊົງສ້າງຟ້າສວັນ ພຣະອົງອົງດຽວຊົງເປັນພຣະເຈົ້າ ຊົງປັ້ນແຕ່ງໂລກໃຫ້ໝັ້ນຄົງ ພຣະອົງບໍ່ໄດ້ຊົງສ້າງມັນໃຫ້ວ່າງເປົ່າ ແຕ່ຊົງສ້າງຄົນໃຫ້ອາໄສຢູ່ ..."

ຄວາມເລິກລັບຂອງໂລກນີ້ບໍ່ມີຂໍ້ສິ້ນສຸດ ຄວາມເປັນຫ່ວງເປັນໄຍຂອງພະຜູ້ເປັນເຈົ້າຕໍ່ສິ່ງມີຊີວິດກໍບໍ່ມີບ່ອນສິ້ນສຸດ. ໃຫ້ຄິດເຖິງຝູງນົກທີ່ບິນອົບພະຍົກຈາກບ່ອນໜຶ່ງໄປສູ່ອີກບ່ອນໜຶ່ງ ນີ້ກໍເປັນປິດ-ສະໜາຂອງທຳມະຊາດອັນໃຫຍ່ອັນໜຶ່ງ, ນົກໂຕນ້ອຍໆສາມາດບິນເປັນໄລຍະທາງຫລາຍພັນກິ-ໂລແມັດໂດຍບໍ່ມີການຢຸດພັກ. ຝູງປາລອຍນ້ຳຂ້າມມະຫາສະໝຸດອັນໄຮ້ຮ່ອຍບອກໄປເຖິງບ່ອນທີ່ພວກມັນຢາກໄປເປັນໄລຍະທາງຫລາຍກວ່າ 1,900 ກິໂລແມັດແລະໃນທີ່ສຸດພວກມັນກໍໄປເຖິງບ່ອນທີ່ມັນຢາກໃຊ້ຊີວິດ. ພວກສັດເຫລົ່ານີ້ສາມາດຮູ້ທາງໄປແລະຮູ້ວ່າຕອນໃດເປັນເວລາທີ່ເໝາະສົມແກ່ການເດີນທາງໄດ້ແນວໃດ?

ໃຜເປັນຜູ້ສອນເຜີ້ງເຊິ່ງເປັນສັດທີ່ມີສະໝອງນ້ອຍໆໃຫ້ເຮັດຮັງເຜີ້ງຢ່າງກັບວິສະວະກຳອັນຍິ່ງໃຫຍ່ ເປັນໃຜເປັນຜູ້ຢູ່ເບື້ອງຫລັງຂອງທຸກສິ່ງ? ພະທຳໂຢບມີຄຳຕອບ:

(ໂຢບ 12:7-9) "ແຕ່ ຂໍຖາມສັດເດັຽຣະສານ ແລະມັນຈະສອນທ່ານ ຖາມນົກໃນອາກາດເບິ່ງ ແລະມັນຈະບອກທ່ານ ຫລືເວົ້າກັບແຜ່ນດິນໂລກ ແລະມັນຈະສອນທ່ານ ແລະຖາມປາທະເລ ມັນຈະປະກາດແກ່ທ່ານ ໃນສິ່ງເຫລົ່ານີ້ມີສິ່ງໃດທີ່ບໍ່ຮູ້ວ່າ ພຣະຫັດຂອງພຣະເຈົ້າຊົງກະທຳໃຫ້ເປັນໄປຢ່າງນັ້ນ?"

ແມ່ນແລ້ວ, ພະເຈົ້າເປັນຜູ້ກະທຳທຸກສິ່ງ. ຄວາມຈິງແລ້ວ ສິດແລະໜ້າທີ່ໃນການນະມັດສະການພະເຈົ້າແມ່ນຍ້ອນມາຈາກວ່າ ພະເຈົ້າຊົງເປັນພະຜູ້ສ້າງ ທຸກສິ່ງທຸກຢ່າງທີ່ມີຊີວິດແມ່ນເປັນໜີ້ຊີວິດພະອົງ.

(ເພງສັນລະເສີນ 100:3) "ຈົ່ງຮູ້ໄວ້ເທີນວ່າ ພຣະຜູ້ເປັນເຈົ້າແມ່ນພຣະເຈົ້າ ພຣະອົງຊົງສ້າງພວກເຮົາ ແລະພວກເຮົາເປັນຂອງພຣະອົງ ພວກເຮົາເປັນໄພ່ພົນຂອງພຣະອົງ ແລະເປັນຝູງແກະຂອງພຣະອົງ"

ພະເຈົ້າຢັ່ງຮູ້ຄວາມຕ້ອງການຂອງເຮົາ ພະອົງມີພະລັງທີ່ຈະຕອບສະໜອງຄວາມຕ້ອງການເຫລົ່າ-ນັ້ນ

(ເຢເຣມີຢາ 32:17) ເຢເຣມີຢາໄດ້ເວົ້າວ່າ "ຂ້າແດ່ພຣະຜູ້ເປັນເຈົ້າ ຄືພຣະອົງເອງ ຜູ້ໄດ້ຊົງສ້າງຟ້າສວັນແລະແຜ່ນດິນໂລກດ້ວຍຣິດທານຸພາບໃຫຍ່ຍິ່ງຂອງພຣະອົງ ແລະດ້ວຍພຣະຫັດຊື່ຢຽດອອກຂອງພຣະອົງ ສຳລັບພຣະອົງບໍ່ມີສິ່ງໃດທີ່ຍາກເກີນ"

ຢາກຖາມພີ່ນ້ອງວ່າ ສິ່ງເຫລົ່ານີ້ເຮັດໃຫ້ພີ່ນ້ອງມີສັນຕິໃນໃຈບໍ່ ເມື່ອພີ່ນ້ອງຮູ້ວ່າພະເຈົ້າສາມາດຄວບຄຸມທຸກສິ່ງທຸກຢ່າງໃນຈັກກະວານນີ້ ແລະໃນຊີວິດຂອງທ່ານ? ບໍ່ມີປັນຫາໃດທີ່ນ້ອຍເກີນໄປສຳຫລັບຈະນຳມາໃຫ້ພະເຈົ້າແຫ່ງຈັກກະວານແກ້ໄຂ ພະອົງຮູ້ທຸກສິ່ງ ພະອົງຍັງຢັ່ງຮູ້ເຖິງອະນາ-ຄົດ.

(ເອຊາຢາ 46:9-10) ເອຊາໄດ້ກ່າວວ່າ "ເຮົາເປັນພຣະຜູ້ເປັນເຈົ້າ ແລະບໍ່ມີອື່ນໃດອີກ ເຮົາເປັນພຣະເຈົ້າ ແລະບໍ່ມີອື່ນໃດເຫມືອນເຮົາ ຜູ້ແຈ້ງຕອນຈົບໃຫ້ຊາບຕັ້ງແຕ່ເລີ້ມຕົ້ນ ແລະແຈ້ງເຖິງສິ່ງທີ່ຍັງບໍ່ໄດ້ທຳເລີຍ ໃຫ້ຊາບຕັ້ງແຕ່ການໂບຮານີ້"

ຊ່າງມີຄວາມສຸກແລະມີຄວາມໝັ້ນໃຈເຫລືອເກີນທີ່ຮູ້ວ່າບໍ່ມີສິ່ງໃດທີ່ຍາກເກີນໄປສຳລັບພະເຈົ້າ

(1 ໂຢຮັນ 4:8) "..ພຣະເຈົ້າຊົງເປັນຄວາມຮັກ"

(ໂຢຮັນ 16:27) ພະເຍຊູໄດ້ກ່າວວ່າ "ດ້ວຍວ່າພຣະບິດາເອງກໍຊົງຮັກແພງທ່ານທັງຫລາຍ"

ພີ່ນ້ອງດີໃຈຫລືບໍ່ທີ່ພະເຈົ້າຜູ້ຊົງພະລັງອຳນາດ ຜູ້ທີ່ສ້າງແລະປົກປັກຮັກສາຈັກກະວານນີ້ເປັນຫ່ວງເປັນໄຍຕົວພີ່ນ້ອງ? ມັນບໍ່ເປັນການດີທີ່ຈະມີຄວາມສົງກັງວົນຊຸ້ນຄິດກ່ຽວກັບອຳນາດອັນບໍ່ມີທີ່ສິ້ນສຸດ, ພະສະຕິປັນຍາປັນຍາ ແລະພະປີຊາສາມາດຂອງພະເຈົ້າ. ແຕ່ວ່າເຮົາສາມາດເຂົ້າໃຈເຖິງຄວາມຮັກຂອງພະອົງ ແລະບໍ່ມີສິ່ງໃດໃນໂລກນີ້ສາມາດແຍກເຮົາອອກຈາກຄວາມຮັກຂອງພະເຈົ້າ

(ໂຣມ 8:38-39) "ເຫດວ່າເຮົາເຊື່ອຢ່າງຫມັ້ນຄົງວ່າ ຄວາມຕາຍຫລືຊີວິດກໍດີ ເທວະດາຫລືຜູ້ປົກຄອງກໍດີ ສິ່ງທີ່ມີຢູ່ດຽວນີ້ຫລືສິ່ງຈະມີມາໃນພາຍຫນ້າກໍດີ ຫລືຣິດເດດທັງຫລາຍ ຄວາມສູງ ຫລືຄວາມເລິກກໍດີ ຫລືສິ່ງອື່ນໃດທີ່ໄດ້ຊົງສ້າງແລ້ວນັ້ນກໍດີ ກໍຈະບໍ່ສາມາດເຮັດໃຫ້ພວກເຮົາຂາດຈາກຄວາມຮັກຂອງພຣະເຈົ້າ ຊຶ່ງມີຢູ່ໃນພຣະເຢຊູຄຣິດເຈົ້າຂອງເຮົາທັງຫລາຍນັ້ນ"

ພະເຈົ້າຮັກເຮົາທັງທີ່ຕອນເຮົາເປັນຄົນສົມຄວາມຮັກແລະເປັນຄົນບໍ່ສົມຄວນຮັກ ພະອົງຮັກເຮົາບໍ່ວ່າເຮົາຈະເປັນຄົນຜິວດຳຫລືຜິວຂາວ ຍິງຫລືຊາຍ ງາມຫລືບໍ່ງາມ ບໍ່ມີຜູ້ໃດຮັກເຮົາເໝືອນພະອົງ!

(ເຢເຣມີຢາ 31:3) ສິ່ງທີ່ສຳຄັນທີ່ສຸດ ພະອົງຮັກເຮົາຕະຫລອດໄປ! "ເຮົາຈຶ່ງຈະຮັກແພງພວກເຈົ້າຢ່າງຫມັ້ນຄົງສືບຕໍ່ໄປ"

(ເພງສັນລະເສີນ 100:5) ດາວິດໄດ້ຂຽນໄວ້ວ່າ "ພຣະຜູ້ເປັນເຈົ້າຊົງປະກອບດ້ວຍຄວາມດີຄວາມຮັກຂອງພຣະອົງມີຢູ່ຕລອດ"

ບາງທີ່ພວກເຮົາກໍອາດມີຄວາມສົງໄສກ່ຽວກັບຄວາມຮັກຂອງພະອົງ, ຢ່າງໃດກໍຕາມພະອົງກໍຍັງອະທິບາຍວ່າ:

(ເອຊາຢາ 49:15,16) "ຜູ້ຍິງທີ່ລືມລູກ ແລະບໍ່ຮັກລູກຂອງຕົນເອງມີບໍ ເຖິງແມ່ນວ່າມີຜູ້ລືມລູກຂອງຕົນກໍຕາມ ແຕ່ເຮົາຈະບໍ່ລືມພວກເຈົ້າຈັກເທື່ອ ເບິ່ງແມ໋, ເຮົາບໍ່ເຄີຍລືມເຈົ້າ ເຮົາໄດ້ຂຽນຊື່ຂອງເຈົ້າໄວ້ໃນໂອ້ງຝາມືຂອງເຮົາແລ້ວ"

ພະເຈົ້າພະຍາຍາມສະແດງໃຫ້ມະເຫັນຄວາມຮັກທີ່ພະອົງມີຕໍ່ເຂົາ, ແຕ່ວ່າຂໍ້ຄວາມຕ່າງໆທີ່ສົ່ງມາໃຫ້ຜ່ານຜູ້ພະຍາກອນແລະທູດສະຫວັນນັ້ນກໍຍັງບໍ່ພໍ ພວກເຮົາບໍ່ເຂົ້າໃຈຂ່າວສານນີ້ເລີຍ. ເພາະ-ສະນັ້ນພະເຈົ້າຈິ່ງໄດ້ສົ່ງພະບຸດຂອງພະອົງ. ພະເຍຊູເປັນຜູ້ທີ່ສະແດງໃຫ້ເຫັນອຸປະນິໄສຂອງພະບິ-ດາເຈົ້າທີ່ດີທີ່ສຸດ.

(ໂຢຮັນ 14:9) ພະເຍຊູໄດ້ກ່າວວ່າ "ຜູ້ທີ່ໄດ້ເຫັນເຮົາກໍໄດ້ເຫັນພຣະບິດາ..."

ຖ້າພວກເຮົາຢາກຮູ້ວ່າພະເຈົ້າເປັນແນວໃດແລະພະອົງຮູ້ສຶກແນວໃດກ່ຽວກັບພວກເຮົາ, ພວກເຮົາສາມາດຮູ້ໄດ້ຈາກການສຶກສາຊີວິດຂອງພະເຍຊູ. ພະອົງໄດ້ລົງມາບັງເກີດເປັນມະນຸດ ພະອົງສາມາດຢັ່ງຮູ້ຄວາມຕ້ອງການຂອງພວກເຮົາ. ພະອົງໄດ້ເທດສະໜາບອກຂ່າວປະເສີດໃຫ້ແກ່ຄົນຍາກ-ຈົນຟັງ. ພະອົງໄດ້ຮັກສາຄົນເຈັບຄົນໄຂ້ທັງຮ່າງກາຍແລະຈິດໃຈ ຮັກສາຄົນຕາບອດໃຫ້ເຫັນແຈ້ງ. ພະອົງລ້ຽງອາຫານຄົນຫິວໂຫຍ ແລະຮ່ວມສະເຫວີຍອາຫານທີ່ບ້ານຂອງພວກເຂົາ. ພະອົງໃຫ້ອະ-ໄພບາບຂອງພວກເຂົາແລະມອບຄວາມຫວັງໃນອະນາຄົດແກ່ພວກເຂົາ.

ຫລາຍຄົນໄດ້ເຫັນໄດ້ຍິນພະອົງ ພະອົງໄດ້ປະທານຊີວິດ, ປະທານຄວາມສຸກຕາມໝູ່ບ້ານຕ່າງທີ່ພະອົງໄປ ພະອົງເປັນຫ່ວງເປັນໄຍຄົນອື່ນຫລາຍກວ່າຕົວພະອົງ. ພະອົງໄດ້ທົນຄວາມອັບອາຍ, ທົນຄວາມດູຖືກ. ຫົວໃຈຂອງພະອົງໄດ້ແຕກສະຫລາຍແລະພະອົງກໍໄດ້ສິ້ນພະຊົນທີ່ຄາວາຣີ

(ໂຢຮັນ 3:16) "ເພາະວ່າພຣະເຈົ້າຊົງຮັກໂລກຈົນໄດ້ປະທານພຣະບຸດອົງດຽວຂອງພຣະອົງ ເພື່ອທຸກຄົນທີ່ວາງໃຈເຊື່ອໃນພຣະບຸດນັ້ນຈະບໍ່ຈິບຫາຍ ແຕ່ມີຊີວິດອັນຕລອດໄປເປັນນິດ"

ແມ່ນແລ້ວ, ພະເຈົ້າໄດ້ສົ່ງພະບຸດຂອງພະອົງເຂົ້າມາໃນໂລກ. ແລ້ວເຮົາຢາກໃຫ້ພະອົງປະທານຫຍັງອີກເພື່ອສະແດງເຖິງຄວາມຮັກຄວາມເປັນຫ່ວງເປັນໄຍຂອງພະອົງ? ພະຄຣິດໄດ້ມາຕາຍ

ແທນພີ່ນ້ອງແລະແທນຂ້າພະເຈົ້າ ພະອົງຕ້ອງທົນຕໍ່ການຊົ່ງນຕີ, ທົນຕໍ່ໜາມທີ່ເຂົາເອົາໃສ່ສີສະຂອງພະອົງ, ທົນຕໍ່ຕະປູທີ່ຕອນໃສ່ມືແລະເທົ້າຂອງພະອົງ ໂດຍທີ່ພະອົງບໍ່ຄັດຄ້ານຫຍັງ. ຖ້າພະອົງປະສົງຮ້ອງທູດສະຫວັນເປັນພັນໆລົງມາຊ່ອຍພະອົງໃນຕອນນັ້ນກໍໄດ້ ແຕ່ພະອົງກໍບໍ່ໄດ້ຮ້ອງ.
ນີ້ຄືຂອງປະທານແຫ່ງຄວາມຮັກແລະຄວາມຫ່ວງໄຍທີ່ພະເຈົ້າໄດ້ປານທານໃຫ້ແກ່ມະນຸດຜູ້ບາບໜາ

(ລູກາ 23:34) ໃນຂະນະທີ່ພະອົງໄດ້ຖືກຕຶງຢ່າງທໍລະມານທີ່ໄມ້ກາງແຂນ ພະອົງໄດ້ອະທິຖານວ່າ "ໂອ ພຣະບິດາເຈົ້າ, ຂໍໂຜດອະພັຍໂທດເຂົາ ເພາະວ່າເຂົາບໍ່ຮູ້ຈັກວ່າເຂົາກຳລັງເຮັດອັນໃດ" ນີ້ຄືພະລັກສະນະຂອງພະເຈົ້າ!

ພີ່ນ້ອງທີ່ຮັກ ແທ້ທີ່ຈິງແລ້ວຄວາມເຈັບປວດຂອງພະເຈົ້າບໍ່ໄດ້ເລີ່ມແລະຈົບຕອນທີ່ພະອົງຖືກຕຶງທີ່ຄາວາຣີ ແຕ່ໄດ້ເລີ່ມຕົ້ນເມື່ອມະນຸດເລືອກເດີນໃນທາງຂອງເຂົາເອງ. ພະອົງຮູ້ສຶກເຖິງຄວາມແຕກແຍກ, ຄວາມເຈັບປວດ ຫລາຍກວ່າພວກເຮົາອີກ ເພາະວ່າພະອົງຮັກພວກເຮົາຫລາຍ
ພະເຈົ້າຍັງຄອຍຖ້າວັນທີ່ມະນຸດຈະຄືນຫາພະອົງ ແລະລູກໆຂອງພະອົງຄືນສູ່ຄອບຄົວຂອງພະອົງ.

(ເອຊາຢາ 45:22) ດຽວນີ້ພະອົງໄດ້ກຳລັງເອີ້ນຫາເຮົາ "ມະນຸດທຸກມຸມໂລກເອີຍ ຈົ່ງຄືນມາຫາເຮົາ ແລະຮັບເອົາການຊ່ອຍໃຫ້ພົ້ນເຖີດ ເຮົາເປັນພຣະເຈົ້າແຕ່ອົງດຽວ ບໍ່ມີພຣະເຈົ້າອົງອື່ນ"

ພະອົງຊ່າງເປັນພະເຈົ້າທີ່ແສນດີແທ້ໆ "ພະອົງຍິ່ງໃຫຍ່ພໍທີ່ຈະຄອບຄອງຈັກກະວານ ແຕ່ພະອົງກໍນ້ອຍພໍທີ່ຈະເຂົ້າໄປຢູ່ໃນໃຈຂອງເຮົາ?

ພີ່ນ້ອງທີ່ຮັກ, ຖ້າພີ່ນ້ອງສະດວກຢາກໃຫ້ພີ່ນ້ອງຍົກມືຂຶ້ນແລະກ່າວນຳກັນ "ຂ້າແດ່ພະເຈົ້າ, ຂ້າພະອົງຂໍເປີດໃຈຮັບເອົາຄວາມຮັກຂອງພະອົງ. ຂອບຄຸນທີ່ສ້າງແລະໄຖ່ຂ້າພະອົງ ຂ້າພະອົງຂໍມອບຊີ-ວິດຂອງຂ້າພະອົງໃຫ້ແດ່ພະອົງນັບຕັ້ງແຕ່ວິນາທີນີ້ໄປ"